# ບົດລາຍງານການປະເມີນຜົນການປັບປຸງບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານ FLEGTVPA ຢູ່ ສປປ ລາວ

ສັງລວມໃຫ້ແກ່ສະຖາບັນປ່າໄມ້ແຫ່ງສະຫະພາບເອີຣົບ (European Forest Institute) ແລະ ຫ້ອງການປະສານງານແຜນງານ FLEGT ສປປ ລາວ (ທີ່ຂຶ້ນກັບ ກົມກວດກາປ່າໄມ້)

09 ພຶດສະພາ 2018

ດຣ Hilary Smith

hilary@latitudeforestservices.com.au

## ສັງລວມໂດຍຫຍໍ້

ສັນຍາການຄ້າຄູ່ຮ່ວມງານແບບສະໝັກໃຈ (VPA) ໃນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງບໍລິຫານ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບ (EU) ແມ່ນຂໍ້ຕົກລົງການຄ້າສອງຝ່າຍທີ່ມີຜົນຜູກມັດທາງກົດໝາຍ ທີ່ມີຈຸດປະສົງແກ້ໄຂການຕັດໄມ້ທີ່ຜິດກົດໝາຍໂດຍການປັບປຸງການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍ. VPA ແມ່ນຂໍ້ຕົກລົງທີ່ຜ່ານການເຈລະຈາ ໃນການປັບປຸງລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS), ເຊິ່ງເປັນລະບົບທີ່ນຳໃຊ້ສະເພາະໃນປະເທດຜູ້ສົ່ງອອກ ທີ່ອີງໃສ່ກົນໄກການຄວບຄຸມທາງດ້ານລະບຽບ ແລະ ກອບກົດໝາຍທີ່ມີຢູ່ຂອງປະເທດຄູ່ຮ່ວມສັນຍາ. ລະບົບ TLAS ມີຈຸດປະສົງເພື່ອລະບຸ, ຕິດຕາມກວດກາ ແລະ ອອກໃບອະນຸຍາດໃຫ້ແກ່ ໄມ້ທີ່ຜະລິດຂຶ້ນມາຢ່າງຖືກກົດໝາຍ ເພື່ອຮັບປະກັນໃຫ້ມີການສົ່ງອອກພຽງແຕ່ໄມ້ທີ່ຖືກກົດໝາຍເທົ່ານັ້ນ. EU ແລະ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສປປ ລາວ) ໄດ້ມີການຕົກລົງການເຈລະຈາ VPA ເຊິ່ງ ສປປ ລາວ ໄດ້ຕັດສິນໃຈວ່າ VPA ຂອງຕົນຈະກວມເອົາທຸກແຫຼ່ງທີ່ມາຂອງໄມ້ ລວມທັງການນຳເຂົ້າ, ການສົ່ງອອກ ແລະ ຕະຫຼາດພາຍໃນ.

ຂະບວນການເຈລະຈາ FLEGT VPA ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປ່ຽນແປງທາງດ້ານນະໂຍບາຍໃຫ້ທີ່ດີຂຶ້ນສຳລັບປ່າໄມ້ ແລະ ຜະລິດຕະພັນປ່າໄມ້. ການປັບປຸງບັນດານິຕິກຳທີ່ກ່ຽວຂ້ອງຈຳນວນຫຼວງຫຼາຍ ແມ່ນກຳລັງດຳເນີນຂຶ້ນໃນຫຼາຍຂະແໜງການທີ່ກ່ຽວຂ້ອງ. ສ່ວນໜຶ່ງຂອງການປັບປຸງນິຕິກຳເຫຼົ່ານີ້ ແມ່ນໄດ້ດຳເນີນມາເປັນໄລຍະເວລາໜຶ່ງແລ້ວ ໃນຂະນະທີ່ນິຕິກຳບາງສ່ວນ ແມ່ນຢູ່ໃນຂັ້ນພິຈາລະນາໃຫ້ມີການປັບປຸງ ເພື່ອໃຫ້ສອດຄ່ອງກັບປັດໃຈທີ່ສົ່ງຜົນໃນພາກພື້ນ, ທິດທາງທາງດ້ານເສດຖະກິດ ແລະ ແຮງກະຕຸ້ນຈາກນາໆຊາດ ລວມທັງແຜນງານຕ່າງໆທີ່ໄດ້ຮັບທຶນສະໜັບສະໜູນຈາກຄູ່ຮ່ວມງານ. ການປັບປຸງບັນດານິຕິກຳອື່ນໆ ກໍ່ກຳລັງດຳເນີນເພື່ອຊຸກຍູ້ໂດຍກົງຕໍ່ກັບການຈັດຕັ້ງປະຕິບັດແຜນງານ FLEGT-VPA.

ຂອບເຂດທາງດ້ານເນື້ອໃນອັນກວ້າງຂວາງຂອງການເຈລະຈາ VPA ລະຫວ່າງ ສະຫະພາບເອີຣົບ ກັບ ສປປ ລາວ ຈະນຳມັນໄປສູ່ການປັບປຸງບັນດານິຕິກຳໃນຫຼາຍຂະແໜງການ, ແຜນງານດັ່ງກ່າວ ໄດ້ເປີດໂອກາດທາງດ້ານການຮ່ວມມື ແລະ ການສະໜັບສະໜູນເຊິ່ງກັນແລະກັນ, ແຕ່ກໍ່ອາດເກີດມີຂໍ້ຂັດແຍ່ງ ລະຫວ່າງ ຂະແໜງການ ຫຼື ແຜນງານ ໃນກໍລະນີທີ່ມີຈຸດປະສົງບໍ່ສອດຄ່ອງກັນ. ສະນັ້ນ, ແຜນງານ VPA ຈຶ່ງເປັນໂອກາດສຳລັບການເຜີຍແຜ່ຂໍ້ມູນ ກ່ຽວກັບ ການຈັດຕັ້ງປະຕິບັດບັນດາກົດລະບຽບເຫຼົ່ານີ້. ແນວໃດກໍ່ຕາມ, ລັກສະນະອັນພົ້ນເດັ່ນຂອງສະພາບເງື່ອນໄຂພາຍນອກໂດຍລວມ ແມ່ນສະແດງໃຫ້ເຫັນເຖິງຄວາມຫຍຸ້ງຍາກບາງດ້ານຂອງ VPA ໃນການສັງລວມເນື້ອໃນເປັນສະບັບສຸດທ້າຍ ພາຍໃນກຳນົດເວລາທີ່ສະເໜີມາເບື້ອງຕົ້ນໂດຍ ສປປ ລາວ. ສິ່ງທ້າທາຍເຫຼົ່ານີ້ສາມາດໄດ້ຮັບການແກ້ໄຂຢູ່ໃນ VPA ເມື່ອມີການຕົກລົງເຫັນດີໃນການປັບປຸງບັນດານິຕິກຳທີ່ກ່ຽວຂ້ອງໃນຕໍ່ໜ້າ.

ຫົວຂໍ້ຕໍ່ໄປນີ້ ແມ່ນລາຍລະອຽດຂອງການປັບປຸງບັນດານິຕິກຳ ແລະ ການລິເລີ່ມປັດໄຈອັນສຳຄັນ ທີ່ມີຜົນສະທ້ອນໃຫ້ແກ່ການຈັດຕັ້ງປະຕິບັດແຜນງານ VPA ທີ່ເປັນເງື່ອນໄຂອັນດີ ສຳລັບການປະສານຮ່ວມມືກັນທີ່ມີຢູ່ແລ້ວ ຫຼື ອາດຈະປະກົດຂື້ນໃນອະນາຄົດ.

ຂະບວນການປັບປຸງກົດໝາຍ ທີ່ກ່ຽວຂ້ອງກັບ ແຜນງານ VPA:

- ການປັບປຸງ ກົດໝາຍ ວ່າດ້ວຍ ທີ່ດິນ ຈະປະກອບດ້ວຍການປັບປຸງລະບຽບການສະເພາະ 9 ສະບັບທີ່ຈະຮັບໃຊ້ເພື່ອສ້າງຄວາມຈະແຈ້ງໃຫ້ແກ່ ຂໍ້ກົດໝາຍ ກ່ຽວກັບ ການຈັດສັນ, ການນຳໃຊ້ ຫຼື ການມອບທີ່ດິນ (ຕົວຢ່າງ: ການສຳປະທານດິນ) ຫຼື ການໃຫ້ເຊົ່າ. ນີ້ອາດຈະຊ່ວຍສ້າງຄວາມຈະແຈ້ງ ໃຫ້ແກ່ ການກຳນົດ ຕົວຢັ້ງຢືນ ທີ່ລະບຸໄວ້ໃນ ນິຍາມໄມ້ ທີ່ຖືກຕ້ອງຕາມກົດໝາຍ ທີ່ກຳລັງປັບປຸງ ພາຍໃຕ້ ການເຈລະຈາແຜນງານ VPA.
- ການປັບປຸງກົດໝາຍ ວ່າດ້ວຍ ປ່າໄມ້–ແຜນງານ VPA, ໂດຍສະເພາະການສ້າງ ແລະ ປັບປຸງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ, ສາມາດສືບຕໍ່ສະໜັບສະໜູນຂະບວນການປັບປຸງບັນດານິຕິກຳທີ່ກ່ຽວຂ້ອງໄດ້ຈາກການວິເຄາະກົດລະບຽບຕ່າງໆທີ່ຄວນແກ້ໄຂ ແລະ ຊ່ອງຫວ່າງຕ່າງໆໃນ ລະບຽບການເຫຼົ່ານັ້ນ ທີ່ອາດມີຄວາມຈຳເປັນທີ່ຈະຕ້ອງແກ້ໄຂ ເມື່ອກົດໝາຍ ວ່າດ້ວຍ ປ່າໄມ້ສະບັບໃໝ່ ໄດ້ຂະຫຍາຍຂອບເຂດເນື້ອໃນໃຫ້ກວ້າງຂື້ນຕື່ມ.

ການປັບປຸງບັນດານິຕິກຳໃນໄລຍະຜ່ານມາ ແລະ ການປັບປຸງນິຕິກຳທີ່ກຳລັງດຳເນີນຢູ່ ທີ່ກ່ຽວຂ້ອງກັບແຜນງານ VPA:

- ຄຳສັ່ງ ສະບັບເລກທີ 15 ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດຕໍ່ກັບການຄຸ້ມຄອງ ແລະ ການກວດກາການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 (ຄຳສັ່ງ ນຍ 15)[1] ກາຍເປັນແຮງກະຕຸ້ນໃຫ້ເກີດຄຳແນະນຳໃໝ່ ຈາກກົມຕ່າງໆ ເຊິ່ງອາດເປັນຜົນເຮັດໃຫ້ເກີດມີແຜນງານໃໝ່ ທີ່ກ່ຽວຂ້ອງກັບການກຳນົດ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ; ນອກຈາກນັ້ນ, TLAS ສາມາດກາຍເປັນເຄື່ອງມືໃນການຕິດຕາມກວດກາ ສຳລັບຂໍ້ກຳນົດຂອງຄຳສັ່ງ ນຍ 15.

---

[1]ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດຂອງການຄຸ້ມຄອງ ແລະ ການກວດກາການຂຸດຄົ້ນໄມ້, ການຂົນສົ່ງ ແລະ ທຸລະກິດໄມ້.

- ຄຳສັ່ງ ສະບັບເລກທີ 31 ຂອງນາຍົກລັດຖະມົນຕີ ປີ 2013[2] ວ່າດ້ວຍ ການຫ້າມການຕັດໄມ້ຊົ່ວຄາວໃນເຂດປ່າຜະລິດແຫ່ງຊາດ ຈະຍັງຄົງມີຜົນບັງຄັບໃຊ້ຈົນກວ່າ ຈະມີການດຳເນີນມາດຕະການທີ່ຈຳເປັນເພື່ອໃຫ້ລັດຖະບານໝັ້ນໃຈວ່າ ສາມາດດຳເນີນການຂຸດຄົ້ນໄມ້ຜ່ານການຄຸ້ມຄອງປ່າໄມ້ແບບຍືນຍົງ.

- ຄຳສັ່ງ ສະບັບເລກທີ 13 ຂອງນາຍົກລັດຖະມົນຕີ ປີ 2012[3] ວ່າດ້ວຍ ການໂຈະການສຳປະທານທີ່ດິນບາງຈຳນວນ ໄດ້ເຮັດໜ້າທີ່ຊ່ວຍຫຼຸດຜ່ອນການເຄື່ອນໄຫວຂອງໄມ້ແປຮູບຈາກບາງພື້ນທີ່ ໃນຂະນະທີ່ການປະເມີນຜົນຂອງໂຄງການພັດທະນາກຳລັງດຳເນີນຢູ່ ໂດຍມີການສະໜັບສະໜູນຈາກບັນຊີລາຍຊື່ການສຳປະທານທີ່ດິນ. ການສະແດງຜົນຈາກລະບົບຂໍ້ມູນການສຳປະທານທີ່ດິນ ຈະສາມາດຕິດຕາມກວດກາໂຄງການລົງທຶນຕ່າງໆໄດ້ຢ່າງທັນການ ແລະ ສາມາດນຳໃຊ້ເປັນແຫຼ່ງຂໍ້ມູນໃຫ້ແກ່ TLAS ສຳລັບເຂດຫັນປ່ຽນທີ່ດິນປ່າໄມ້.

- ການປັບປຸງດຳລັດ ສະບັບເລກທີ 96/ນຍ ວ່າດ້ວຍ ການສົ່ງເສີມ ແລະ ການລົງທຶນປູກໄມ້ ມີຈຸດປະສົງສົ່ງເສີມການລົງທຶນປູກໄມ້ທາງການຄ້າ. ເຖິງແນວໃດກໍ່ຕາມ, ໂດຍທົ່ວໄປແລ້ວ ຄ່າໃຊ້ຈ່າຍສຳລັບການບັນລຸຂໍ້ກຳນົດຕ່າງໆທີ່ລະບຽບການກ່ຽວກັບການປູກໄມ້ກຳນົດໄວ້ ແມ່ນຍັງເປັນຂໍ້ຈຳກັດສຳລັບຊາວກະສິກອນຂະໜາດນ້ອຍ. ຜົນຕາມມາ, ຊາວກະສິກອນຂະໜາດນ້ອຍ ຍັງຖືກດຶງດູດເຂົ້າຫາຕະຫຼາດບໍ່ເປັນທາງການ ແລະ ໄມ້ປູກຂອງເຂົາເຈົ້າອາດຈະມີເງື່ອນໄຂເໝາະສົມຕາມຂໍ້ກຳນົດ VPA ໃນອະນາຄົດ. ແຜນງານ VPA ສາມາດເປັນຂໍ້ມູນໃຫ້ແກ່ຂະບວນການປັບປຸງນິຕິກຳທີ່ກ່ຽວຂ້ອງ ເພື່ອສ້າງຄວາມອາດສາມາດໃຫ້ແກ່ຊາວກະສິກອນຂະໜາດນ້ອຍສາມາດປະຕິບັດຕາມລະບຽບການຢ່າງຖືກຕ້ອງ.

- ນອກຈາກທີ່ກ່າວມາຂ້າງເທິງແລ້ວ, ການສ້າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ TLAS ລວມມີການກວດກາຂະບວນການດ້ານລະບຽບກົດໝາຍ ແລະ ການລະບຸຊ່ອງຫວ່າງ ແລະ ຄວາມບໍ່ສອດຄ່ອງທາງດ້ານເນື້ອໃນ.ມັນມີຄວາມເປັນໄປໄດ້ໃນການເປັນຂໍ້ມູນໃຫ້ແກ່ການປັບປຸງແກ້ໄຂບັນດາກົດລະບຽບທີ່ມີຢູ່, ໂດຍສະເພາະທີ່ກ່ຽວຂ້ອງກັບ: ປ່າໄມ້ບ້ານ ແລະ ຕົ້ນໄມ້ຢູ່ນອກປ່າໄມ້; ການປຸງແຕ່ງ ແລະ ຂາຍໄມ້ຢູ່ພາຍໃນຂະແໜງທາງການ ແລະ ບໍ່ເປັນທາງການ; ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຕໍ່ ແລະ ການຂົນສົ່ງໄມ້; ການກະຈາຍຜົນປະໂຫຍດ; ຄວາມໂປ່ງໃສ/ການເປີດເຜີຍຂໍ້ມູນ; ແລະ ກົນໄກການຮ້ອງຮຽນ/ການຮ້ອງທຸກ ແລະ ການຍິນຍອມເຫັນດີ.

---

[2]ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ ລົງວັນທີ 5 ພະຈິກ 2013 ວ່າດ້ວຍການໂຈະການຕັດໄມ້ຊົ່ວຄາວໃນເຂດປ່າຜະລິດແຫ່ງຊາດ.

[3]ຄຳສັ່ງ*ນາຍົກລັດຖະມົນຕີ* ເລກທີ 13/ນຍ ລົງວັນທີ 11 ມິຖຸນາ 2012 ວ່າດ້ວຍການໂຈະການພິຈາລະນາ ແລະ ການອະນຸມັດໂຄງການລົງທຶນໃໝ່ທີ່ກ່ຽວຂ້ອງກັບການສຳຫຼວດ ແລະ ການຂຸດຄົ້ນບໍ່ແຮ່, ການປູກຢາງພາລາ ແລະ ຕົ້ນວິກໃນທົ່ວປະເທດ

ຍຸດທະສາດ ແລະ ແຜນການສຳຄັນທີ່ກ່ຽວຂ້ອງກັບຂະບວນການ VPA:

- ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ 8 ແຕ່ປີ 2016-2020 ລວມເອົາການອ້າງອີງທີ່ຈະແຈ້ງ ກ່ຽວກັບການປັບປຸງ ແລະ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ສະພາບເງື່ອນໄຂທາງກົດໝາຍ ໃນການຄຸ້ມຄອງປ່າໄມ້ ແລະ ຜະລິດຕະພັນປ່າໄມ້. ຜ່ານແຜນງານ VPA, ການນຳສະເໜີ ແລະ ການວິເຄາະຢ່າງເປັນລະບົບ ກ່ຽວກັບສະພາບເງື່ອນໄຂທາງດ້ານກົດໝາຍ ສາມາດນຳໃຊ້ເປັນພື້ນຖານສຳລັບການລະບຸຂົງເຂດຕ່າງໆທີ່ສາມາດປັບປຸງນະໂຍບາຍ ແລະ ນິຕິກຳເຫຼົ່ານັ້ນ ເພື່ອເພີ່ມທະວີຜົນການດຳເນີນງານ.
- ຍຸດທະສາດປ່າໄມ້ຮອດປີ 2020 ຈະໄດ້ຮັບການປັບປຸງແກ້ໄຂໃນໄວໆນີ້. ສາມາດນຳໃຊ້ໂຄງຮ່າງອົງການຈັດຕັ້ງທີ່ມີສ່ວນຮ່ວມໃນ VPA ເປັນຮູບແບບສຳລັບຂະບວນການປຶກສາຫາລືແບບເປີດກວ້າງໃນການປັບປຸງຍຸດທະສາດປ່າໄມ້ຄັ້ງຕໍ່ໄປ. VPA ຈະລະບຸຂົງເຂດວຽກບຸລິມະສິດຕ່າງໆ ເພື່ອປັບປຸງບັນດານິຕິກຳທີ່ກ່ຽວຂ້ອງ.ເມື່ອພັດທະນາແລ້ວ ແລະ ຖ້າໄດ້ຮັບການຈັດຕັ້ງ ແລະ ດຳເນີນຢ່າງເໝາະສົມ, TLAS ຈະເປັນລະບົບທີ່ສະໜອງໂຄງສ້າງໃນການບັນລຸໄດ້ການຄຸ້ມຄອງປ່າໄມ້ແບບຍືນຍົງທີ່ສອດຄ່ອງກັບຍຸດທະສາດໃນຂະແໜງການປ່າໄມ້ຂອງປະເທດລາວ.
- ໃນລະຫວ່າງ 2015-2016, ຂົງເຂດວຽກງານຫຼັກຂອງການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ ແລະ ປ່າໄມ້ ປີ 2016-2020 ແມ່ນເພື່ອ ສ້າງ ແລະ ປັບປຸງບັນດາກົດລະບຽບ, ລະບຽບການ ແລະ ຍຸດທະສາດປ່າໄມ້ ພ້ອມທັງ ເຜີຍແຜ່ນິຕິກຳເຫຼົ່ານີ້ໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນທົ່ວໄປ. ແຜນງານ VPA ໄດ້ຊ່ວຍໃນການສ້າງຄວາມຮັບຮູ້ກ່ຽວກັບ ກົດລະບຽບການໃນຂະແໜງປ່າໄມ້ ຜ່ານການເຂົ້າຮ່ວມ ແລະ ເຮັດວຽກຮ່ວມກັນຂອງກຸ່ມຊ່ຽວຊານສະເພາະດ້ານ(TEG) ແລະ ໂຄງການທົດລອງຕ່າງໆ. ຮອບວຽນການວາງແຜນໃນອະນາຄົດ ສາມາດນຳໃຊ້ວິທີການ ແລະ ໂຄງສ້າງນີ້ ເພື່ອຜັນຂະຫຍາຍຜົນການປຶກສາຫາລື ເພື່ອຍົກຂຶ້ນພິຈາລະນາໃນລະດັບແຜນຍຸດທະສາດຕ່າງໆທີ່ສຳຄັນ.
- ຍຸດທະສາດການສົ່ງອອກແຫ່ງຊາດ 2011-2015 ໂດຍຕັ້ງເປົ້າໝາຍໃສ່ 9 ຂະແໜງການ ລວມທັງຂະແໜງຜະລິດຕະພັນໄມ້. VPA ຈະກວມເອົາທຸກຂະແໜງການຂອງອຸດສາຫະກຳໄມ້ລາວ ແລະ ການສົ່ງອອກໄມ້ທັງໝົດ. ດັ່ງນັ້ນ, ໂດຍຮ່ວມກັບລະບົບ TLAS, ເມື່ອແຜນງານນັ້ນເລີ່ມຕົ້ນຈັດຕັ້ງປະຕິບັດ VPA ຈະກາຍເປັນຫຼັກການທີ່ສຳຄັນ ໃຫ້ແກ່ຍຸດທະສາດການສົ່ງອອກ ແລະ ແຜນງານອຳນວຍຄວາມສະດວກໃນຂະແໜງການຄ້າສຳລັບໄມ້ ແລະ ການສົ່ງອອກໄມ້ຈາກ ສປປ ລາວ .
- ຍຸດທະສາດການເຕີບໂຕສີຂຽວເນັ້ນໜັກໃສ່ຫຼາຍຂົງເຂດທີ່ກ່ຽວພັນໂດຍກົງກັບ VPA. ສອງແຜນງານດັ່ງກ່າວ ສາມາດສະໜັບສະໜູນເຊິ່ງກັນ ແລະ ກັນ, ໂດຍສະເພາະ ການພັດທະນາ 'ຄຳແນະນຳ ກ່ຽວກັບ ການພັດທະນາລະບົບ TLAS' ທີ່

ກຳລັງດຳເນີນຢູ່ ໂດຍຜ່ານການປຶກສາຫາລື ແລະ ຮ່ວມມືກັບຫ້ອງການ FLEGT. ຂົງເຂດວຽກງານອື່ນໆທີ່ກ່ຽວຂ້ອງລວມມີການຮັບຮູ້ເຊິ່ງກັນແລະກັນ ກ່ຽວກັບ ການປະຕິບັດຕາມພາຍໃຕ້ລະບົບ TLAS ແລະ ລະບົບການຢັ້ງຢືນຂອງພາກສ່ວນທີສາມ.

ການລິເລີ່ມນະໂຍບາຍລະຫວ່າງປະເທດ ແລະ ສອງຝ່າຍ ທີ່ກ່ຽວຂ້ອງກັບຂະບວນການ VPA:

- ການລິເລີ່ມ ກ່ຽວກັບ ວຽກງານການປ່ຽນແປງສະພາບອາກາດ, REDD+ ແລະ FLEGT ສະແດງເຖິງການເຮັດວຽກຮ່ວມກັນ ແລະ ໂອກາດສຳລັບການຮ່ວມມືກັນ ເຊິ່ງລວມທັງການແກ້ໄຂການຕັດໄມ້ທີ່ຜິດກົດໝາຍທີ່ນຳໄປສູ່ການທຳລາຍປ່າ ແລະ ການເສື່ອມໂຊມຂອງປ່າໄມ້, ແລະ ການປັບປຸງການຄຸ້ມຄອງປ່າໄມ້. ໂດຍສະເພາະແລ້ວ, ກະຊວງທີ່ຮັບຜິດຊອບການລິວຽກງານເຫຼົ່ານີ້ ປະກອບດ້ວຍ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ມີຄວາມຮັບຜິດຊອບທີ່ສຳຄັນໃນການພັດທະນາ ແລະ ປັບປຸງສາມກົດໝາຍທີ່ຕົ້ນຕໍ (ກົດໝາຍ ວ່າດ້ວຍ ທີ່ດິນ, ກົດໝາຍ ວ່າດ້ວຍ ປ່າໄມ້ ແລະ ກົດໝາຍ ວ່າດ້ວຍ ການປ່ຽນແປງສະພາບອາກາດ) ເພື່ອຮັບປະກັນໃຫ້ກົດໝາຍເຫຼົ່ານີ້ມີເນື້ອໃນທີ່ສອດຄ່ອງກັນ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.
- ສົນທິສັນຍາລະຫວ່າງປະເທດ ວ່າດ້ວຍ ການຄ້າສັດປ່າ ແລະ ພືດປ່າທີ່ໃກ້ສູນພັນ (CITES) – ຂະບວນການສ້າງ ແລະ ປັບປຸງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ກຳລັງຊ່ອຍໃນການລະບຸຫາຊ່ອງຫວ່າງໃນເອກະສານທາງດ້ານກົດໝາຍ ແລະ ຂະບວນການຕ່າງໆທີ່ກ່ຽວຂ້ອງກັບໄມ້ ລວມທັງການລະບຸລາຍການຊະນິດພັນໄມ້. ວຽກງານດັ່ງກ່າວອາດຈະຊ່ອຍໃຫ້ຈຸດປະສານງານຫຼັກຂອງວຽກງານ CITES ສາມາດສ້າງລະບອບການທີ່ຕອບສະໜອງໄດ້ຕາມຂໍ້ກຳນົດຂອງ CITES.
- ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສປປ ລາວ- ສສ ຫວຽດນາມ ວ່າດ້ວຍ ການເພີ່ມທະວີການຮ່ວມມືໃນການປົກປັກຮັກສາປ່າໄມ້ ສາມາດສ້າງໂອກາດ ໃນການແບ່ງປັນປະສົບການ ກ່ຽວກັບການສ້າງ ແລະ ການຈັດຕັ້ງປະຕິບັດ VPA ແລະ TLAS ແລະ ປັບປຸງຄວາມສຳພັນທາງການຄ້າໄມ້ຖືກກົດໝາຍໃນຂົງເຂດພາກພື້ນ.

ການປັບປຸງການຄຸ້ມຄອງບໍລິຫານທີ່ກຳລັງດຳເນີນທີ່ມີຄວາມກ່ຽວຂ້ອງກັບແຜນງານ VPA:

- ການປັບປຸງຢູ່ພາຍໃນຂະແໜງການຕ່າງໆຂອງລັດຖະບານເຊັ່ນ: ການປັບປຸງໂຄງສ້າງຂອງ ກົມຄຸ້ມຄອງຊັບພະຍາກອນປ່າໄມ້/ກົມປ່າໄມ້ ແລະ ການຈັດຕັ້ງ ແລະ ການເຄື່ອນໄຫວໃໝ່ ສຳລັບ ກົມກວດກາປ່າໄມ້, ຈະມີຜົນຕໍ່ກັບການບັນລຸເປົ້າໝາຍໃນຈາກການຄຸ້ມຄອງບໍລິຫານທີ່ດີ ແລະ ການດຳເນີນລະບົບ TLAS. ຂະບວນການປຶກສາຫາລືໃນການສ້າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ໄດ້ເຮັດໜ້າທີ່ສ້າງຄວາມຈະແຈ້ງໃນບາງດ້ານ ກ່ຽວກັບ ພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບທີ່ຍັງບໍ່ທັນຈະແຈ້ງ ໂດຍສະເພາະ ແມ່ນຄວາມຮັບຜິດຊອບທີ່ທັບຊ້ອນກັນ. ແຜນ

ງານ VPA ສາມາດນຳໄປສູ່ການປັບປຸງລະບົບໃຫ້ມີຄວາມທັນສະໄໝ ແລະ ການເຮັດໃຫ້ລະບຽບການ ແລະ ຂັ້ນຕອນການອະນຸມັດຕ່າງໆງ່າຍຂຶ້ນ ແລະ ຊ່ວຍໃນການສ້າງຄວາມຈະແຈ້ງ ແລະ ລະບຸຫາຊ່ອງຫວ່າງຕ່າງໆໃນຂອບເຂດສິດ ແລະໜ້າທີ່ຮັບຜິດຊອບຂອງກົມຕ່າງໆ.

ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ໃນການຂະບວນການສ້າງ ແລະ ປັບປຸງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ, ລວມທັງການມສ່ວນຮ່ວມຈາກລະດັບຂັ້ນຕ່າງໆຂອງກະຊວງທີ່ກ່ຽວຂ້ອງ ແລະ ຂະແໜງການບໍ່ສັງກັດລັດ, ໄດ້ເພີ່ມຄວາມຮັບຮູ້ກ່ຽວກັບຂະບວນການ ແລະ ນິຕິກຳ ໃນຂະແໜງການປ່າໄມ້ ແລະ ການຄ້າໄມ້. ນອກນັ້ນ ຍັງເປັນການສະແດງໃຫ້ເຫັນຄວາມກ່ຽວພັນທີ່ມີລັກສະນະສັບຊ້ອນທາງດ້ານເນື້ອໃນຂອງລະບຽບການຂອງຂະແໜງການຕ່າງໆ. ການສ້າງຄວາມອາດສາມາດ ແລະ ການເພີ່ມຄວາມຮູ້ຄວາມເຂົ້າໃຈ ໃຫ້ແກ່ລັດຖະບານລາວ ກ່ຽວກັບຄວາມຊັບຊ້ອນດັ່ງກ່າວອາດຈະຊ່ວຍປັບປຸງການຄຸ້ມຄອງບໍລິຫານປ່າໄມ້ໂດຍລວມໃຫ້ດີຂຶ້ນ. ເຖິງແນວໃດກໍ່ຕາມ, ການປັບປຸງນິຕິກຳອື່ນໆຈະຕ້ອງມີການປັບໃຫ້ມີຄວາມງ່າຍດາຍ ແລະ ປັບປຸງບາງອົງປະກອບດ້ານລະບຽບການຂຶ້ນຕື່ມ ແລະ ສ້າງຄວາມຈະແຈ້ງດ້ານພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງໜ່ວຍງານລັດຖະບານທີ່ກ່ຽວຂ້ອງ.ໃນຂະນະທີ່ກອບກົດລະບຽບຍັງຄົງສັບສົນຫຼາຍເກີນໄປຢູ່, ມັນຍາກໃນການດຳເນີນການບັງຄັບໃຊ້ຂອງຕົນຢ່າງກົງກັນ.

ສປປ ລາວ ໄດ້ຮັບການຊ່ວຍເຫຼືອຈາກ ຄູ່ຮ່ວມງານຫຼາຍພາກສ່ວນ ແລະ ໂຄງການທີ່ກຳລັງສ້າງຖານຂໍ້ມູນ ແລະ ຄວາມອາດສາມາດໃຫ້ແກ່ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງກັບປ່າໄມ້ ແລະ ການຄ້າໄມ້. ໃນຂະນະທີ່ໂຄງການເຫຼົ່ານີ້ມີຄວາມກ່ຽວຂ້ອງ ແລະ ສຳພັນກັນ, ແຕ່ບາງຄັ້ງກໍມີການຈັດຕັ້ງປະຕິບັດແບບແຍກກັນ ໂດຍເນັ້ນໜັກໃສ່ຈຸດປະສົງອັນສະເພາະ. VPA ສາມາດສ້າງໂຄງສ້າງສຳລັບການປະສົມປະສານ ແລະ ສັງລວມຜົນໄດ້ຮັບກ່ຽວຂ້ອງທີ່ສຳຄັນ.

ລັກສະນະທີ່ໂດດເດັ່ນຂອງຕະຫຼາດການຄ້າໄມ້ ແລະ ຄວາມສຳຄັນຂອງປ່າໄມ້ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນລາວ ຈະເປັນສິ່ງທ້າທາຍຢ່າງຕໍ່ເນື່ອງ. ຕໍ່ຈາກນີ້ໄປ, ການປຶກສາຫາລື ແລະ ການມີສ່ວນຮ່ວມຢ່າງຕໍ່ເນື່ອງຂອງພາກສ່ວນກ່ຽວຂ້ອງຈະເປັນປັດໃຈສຳຄັນ ທີ່ເຮັດໃຫ້ VPA ຍັງຄົງມີຄວາມກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດ TLAS ໄດ້ຢ່າງມີປະສິດທິຜົນ.

ບົດລາຍງານນີ້ ໄດ້ອະທິບາຍ ກ່ຽວກັບ ການປັບປຸງບັນດານິຕິກຳ ແລະ ການນະໂຍບາຍພາຍໃນປະເທດທີ່ກ່ຽວຂ້ອງກັບ FLEGT ຈົນຮອດປີ 2020. ເຖິງແນວໃດກໍ່ຕາມ, ບາງໜ້າວຽກທີ່ສາມາດຈັດຕັ້ງປະຕິບັດໄດ້ໂດຍທັນທີ ສາມາດລະບຸໄດ້ດັ່ງລຸ່ມນີ້::

1. ໃນໄລຍະການປັບປຸງກົດໝາຍ ວ່າດ້ວຍ ປ່າໄມ້, ສະເໜີໃຫ້ມີການສັງລວມເອົາມາດຕາອັນສະເພາະ ທີ່ສະແດງໃຫ້ເຫັນເຖິງຄຳໝັ້ນ ແລະ ຄວາມເອົາໃຈໃສ່ ໃນການປັບປຸງ,ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາລະບົບ TLAS.
2. ຮັບປະກັນໃຫ້ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບປັບປຸງ ແລະ ກົດໝາຍ ວ່າດ້ວຍ ທີ່ດິນ ມີຄວາມສອດຄ່ອງ ແລະ ສົ່ງເສີມເຊິ່ງກັນແລະກັນ ພ້ອມທັງກຳນົດລະບຽບການທີ່ຈະແຈ້ງສຳລັບການເຂົ້າເຖິງທີ່ດິນ ແລະ ປ່າໄມ້ສຳລັບໂຄງການທີ່ມີການຫັນປ່ຽນປ່າໄມ້ທຳມະຊາດ ແລະ ການເຂົ້າເຖິງທີ່ດິນຂອງບໍລິສັດ, ໂຄງການສວນປູກໄມ້ແບບລວມໝູ່ ແລະ ລະດັບຄົວເຮືອນ.
3. ໃນໄລຍະການປັບປຸງກົດໝາຍ ວ່າດ້ວຍ ປ່າໄມ້, ສະເໜີໃຫ້ພິຈາລະນາຄວາມຈຳເປັນໃນການແກ້ໄຂກົດລະບຽບທີ່ມີຢູ່ ແລະ ສ້າງລະບຽບການໃໝ່ສຳລັບການຄຸ້ມຄອງປ່າໄມ້ອັນສະເພາະ ແລະ ບັນດາກົດຈະກຳທຸລະກິດທີ່ກ່ຽວກັບປ່າໄມ້. ການປັບປຸງເນື້ອໃນດັ່ງກ່າວ ຄາດໝາຍໃຫ້ສຳເລັດໃນໄລຍະການປຶກສາຫາລືໃນຕົ້ນປີ 2018, ເຖິງແນວໃດກໍ່ຕາມ ມີບາງໜ້າວຽກທີ່ສາມາດດຳເນີນການໄດ້:
    a. ປັບປຸງເນື້ອໃນໃຫ້ມີຄວາມສອດຄ່ອງກັນ ແລະ ແກ້ໄຂບັນດາຊ່ອງຫວ່າງໃນລະບຽບການ ສຳລັບ ການຂຸດຄົ້ນໄມ້ໃນປ່າຜະລິດ ແລະ ເຂດປ່າສະຫງວນ
    b. ປັບປຸງຂັ້ນຕອນຂອງລະບຽບການໃຫ້ມີຄວາມງ່າຍດາຍ ແລະ ຈະແຈ້ງຂຶ້ນ ສຳລັບສວນປູກໄມ້, ແລະ ສວນປູກໄມ້ທີ່ຊາວກະສິກອນເປັນເຈົ້າຂອງເອງ
    c. ສ້າງລະບຽບການ ກ່ຽວກັບ ຂັ້ນຕອນສຳລັບການປະມູນໄມ້ ໃຫ້ສຳເລັດ ເພື່ອໃຫ້ສາມາດນຳໃຊ້ໄມ້ທ່ອນໂຮມແລະ ໄມ້ຖືກຮິບເຂົ້າສູ່ການປຸງແຕ່ງພາຍໃນປະເທດໄດ້ຫຼາຍຂຶ້ນ
    d. ຜ່ານຂະບວນການສ້າງ ແລະ ປັບປຸງ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ, ດຳເນີນການວິເຄາະຫາຊ່ອງຫວ່າງທາງດ້ານກົດໝາຍ ກ່ຽວກັບຜະລິດຕະພັນປ່າໄມ້ທີ່ມາຈາກປ່າໄມ້ບ້ານ ລວມທັງການສ້າງຄວາມຈະແຈ້ງ ກ່ຽວກັບສິດການນຳໃຊ້ຜະລິດຕະພັນຈາກປ່າໄມ້ຂອງຊາວບ້ານໃນທຸກປະເພດປ່າໄມ້. ສະເໜີໃຫ້ມີການສ້າງລະບົບທີ່ສະດວກ ແລະ ງ່າຍສຳລັບການຄວບຄຸມຕ່ອງໂສ້ການສະໜອງໄມ້.
4. ນຳສະເໜີກົນໄກໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 15 ຂອງນາຍົກລັດຖະມົນຕີ ທີ່ໃຫ້ສິດອຳນາດ ແລະ ເງື່ອນໄຂອັນເໝາະສົມໃຫ້ແກ່ຂະບວນການປັບປຸງນະໂຍບາຍຍ່າງເປີດກວ້າງ.

5. ປະເມີນບັນດາເງື່ອນໄຂທາງດ້ານນະໂຍບາຍ ແລະ ດຳເນີນການວິເຄາະຊ່ອງຫວ່າງທາງດ້ານກົດໝາຍ ສຳລັບວິສາຫະກິດປຸງແຕ່ງໄມ້ຂະໜາດນ້ອຍ, ລະດັບຄົວເຮືອນ ແລະ ກຸ່ມຜູ້ປຸງແຕ່ງໄມ້ທີ່ກຳລັງປາກົດຂື້ນ.
6. ພິຈາລະນາການປັບປຸງປັດໃຈທີ່ກ່ຽວຂ້ອງໃຫ້ມີຄວາມເໝາະສົມກັບລະບຽບການທີ່ຕິດພັນກັບຜູ້ຕ້ອງການວັດຖຸດິບໄມ້ ແລະ ຜູ້ຊື້ຂາຍໄມ້ໃນຕ່ອງໂສ້ສະໜອງໄມ້ຈາກແຫຼ່ງຕ່າງໆ.
7. ປັບປຸງຂອບເຂດທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບ ຂັ້ນຕອນ ການປະມູນໄມ້ ສຳລັບໄມ້ຈາກເຂດປ່າຜະລິດ ແລະ ເຂດປ່າສະຫງວນ.

ທັງໝົດຈະສະໜັບສະໜູນ ໃນການປັບປຸງ VPA ໃນອະນາຄົດອັນໃກ້ ແລະ ປະກອບສ່ວນເຂົ້າໃນການບັນລຸໄດ້ບັນດາເປົ້າໝາຍຂອງນະໂຍບາຍລະດັບຊາດ.